ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********************

ທະນາຄານແຫ່ງ ສປປ ລາວ ເລກທີ: /ທຫລ

ນະຄອນຫຼວງວຽງຈັນ, ວັນທີ

# ບົດປະເມີນຜົນກະທົບຂອງການປັບປຸງ
## ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012
## (Impact Assessment Note)

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການປັບປຸງ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012

### 1.1. ຂໍ້ມູນຕິດຕໍ່ພົວພັນ

- ຊື່ ກະຊວງ/ອົງການ: ທະນາຄານແຫ່ງ ສປປ ລາວ.
- ຊື່ ກົມ/ພະແນກ: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
- ຊື່ ແລະ ຕຳແໜ່ງຂອງພະນັກງານທີ່ຮັບຜິດຊອບ: ທ່ານ ບົວລຳພູ ຄຳມະນີວົງ, ຫົວໜ້າພະແນກນິຕິກຳ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
- ເບີໂທລະສັບ: 020 22224739, 021 217770.
- ອີເມລ: khammanyvong@hotmail.com.

### 1.2. ຊື່ນິຕິກຳ

ຊື່ຮ່າງນິຕິກຳ: ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ປີ 2018.

ຮ່າງນິຕິກຳແມ່ນສະບັບ: ☐ ໃໝ່ ☑ ປັບປຸງ

### 1.3. ກຳນົດເວລາ

ການປັບປຸງ ກົດໝາຍວ່າດ້ວຍຫຼັກຊັບ ໃນຄັ້ງນີ້ ໄດ້ເລີ່ມຕົ້ນແຕ່ເດືອນ ກໍລະກົດ 2016 ແລະ ຈະໃຫ້ສຳເລັດໃນເດືອນ ເມສາ 2018.

- ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012, ສະບັບເລກທີ 543/ທຫລ, ລົງວັນທີ 07 ກໍລະກົດ 2016;
- ແຕ່ງຕັ້ງອະນຸກຳມະການຊ່ວຍວຽກ ຄະນະຮັບຜິດຊອບຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບ, ລົງວັນທີ 18 ພະຈິກ 2016;
- ທາບທາມຄຳເຫັນຮ່ວມກັບ ຜູ້ມີສ່ວນຮ່ວມໃນຕະຫຼາດຫຼັກຊັບ ແລະ ທະນາຄານແຫ່ງ ສປປ ລາວ ໃນພາຍໃນເດືອນ ມີນາ 2019;

- ທາບທາມຄໍາເຫັນເປີດກວ້າງ (ພາກເໜືອ, ພາກກາງ ແລະ ພາກໃຕ້) ໃນພາຍໃນເດືອນ ເມສາ ຫາ ພຶດສະພາ 2019;
- ສົ່ງຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ໃຫ້ກະຊວງຍຸຕິທໍາ ເພື່ອກວດກາຄວາມສອດຄ່ອງ ພາຍໃນເດືອນ ກໍລະກົດ 2019;
- ສົ່ງຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເຂົ້າຜ່ານກອງປະຊຸມລັດຖະບານ ພາຍໃນເດືອນ ສິງຫາ 2019;
- ສະເໜີຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຕໍ່ຄະນະປະຈໍາສະພາແຫ່ງຊາດ ພາຍໃນເດືອນ ກັນຍາ 2019;
- ສະເໜີຈັດກອງປະຊຸມສໍາມະນາເຜີຍແຜ່ກ່ຽວກັບວຽກງານຕະຫຼາດທຶນ ແລະ ກົດໝາຍເປີດກວ້າງຮ່ວມກັບ ບັນດາທ່ານສະມາຊິກສະພາແຫ່ງຊາດ ພາຍໃນເດືອນ ກັນຍາ 2019;
- ພິຈາລະນາຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຢູ່ກອງປະຊຸມສະພາແຫ່ງຊາດ ພາຍໃນເດືອນ ຕຸລາ 2019;
- ຮັບຮອງເອົາຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ສະເໜີກົດໝາຍຕໍ່ປະທານປະເທດ ພາຍໃນເດືອນ ພະຈິກ ຫາ ທັນວາ 2019;
- ປະທານປະເທດພິຈາລະນາອອກລັດຖະດໍາລັດປະກາດໃຊ້ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ພາຍໃນເດືອນ ມັງກອນ 2020;
- ລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ພາຍໃນເດືອນ ກຸມພາ 2020.

## 2. ບັນຫາ ແລະ ຈຸດປະສົງ

### 2.1. ບັນຫາ

ນັບແຕ່ປະທານປະເທດ ແຫ່ງ ສປປ ລາວ ໄດ້ອອກລັດຖະດໍາລັດກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 027/ປປທ, ລົງວັນທີ 17 ມັງກອນ 2012 ເປັນຕົ້ນມາ ຊຶ່ງຖືວ່າເປັນນິຕິກໍາສູງສຸດທີ່ໄດ້ນໍາໃຊ້ເຂົ້າໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານຫຼັກຊັບ ແລະ ຊຸກຍູ້ໃຫ້ມີການເຂົ້າຮ່ວມຂອງ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ເຮັດໃຫ້ການລະດົມທຶນຜ່ານຕະຫຼາດທຶນ ແລະ ການພັດທະນາຕະຫຼາດຫຼັກຊັບ ຢູ່ ສປປ ລາວ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ຍືນຍົງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ຜ່ານການຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວໃນໄລຍະຜ່ານມາ ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ເຫັນໄດ້ວ່າ ໄດ້ສົ່ງຜົນກະທົບດ້ານດີຕໍ່ການພັດທະນາວຽກງານຫຼັກຊັບຂອງ ສປປ ລາວ ຫຼາຍດ້ານພໍສົມຄວນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ການພັດທະນາຕະຫຼາດທຶນ ມີຜົນສໍາເລັດ ແລະ ມີການຂະຫຍາຍຕົວຫຼາຍດ້ານ ອີງໃສ່ກົດໝາຍສະບັບດັ່ງກ່າວ ໄດ້ຮັບຮອງເອົາ ທະນາຄານດູແລຊັບສິນ ... ແຫ່ງ, ຮັບຮອງບໍລິສັດກວດສອບ ... ແຫ່ງ, ຮັບຮອງບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ..... ແຫ່ງ ແລະ ບໍລິສັດປະເມີນມູນຄ່າຊັບສິນ ..... ແຫ່ງ, ມີບໍລິສັດຫຼັກຊັບ ... ແຫ່ງ ທີ່ເຮັດໜ້າທີ່ກະກຽມຄວາມພ້ອມໃນການອອກຈໍາໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ແລະ ເປັນນາຍໜ້າຊື້-ຂາຍຫຼັກຊັບ, ມີ ... ບໍລິສັດ ທີ່ໄດ້ລະດົມທຶນຜ່ານຕະຫຼາດທຶນ, ຊຶ່ງສາມາດລະດົມທຶນໄດ້ທັງໝົດ ..... ຕື້ກີບ ຫຼື ເທົ່າກັບ ..... % ຂອງ GDP, ມີມູນຄ່າຕະຫຼາດຮອດເດືອນ ກໍລະກົດ ປີ 2019 ທັງໝົດ ..... ກີບ ຫຼື ເທົ່າກັບ ..... ລ້ານໂດລາສະຫະລັດ. ມີຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າມາເຄື່ອນໄຫວຊື້-ຂາຍຫຼັກຊັບຫຼາຍພໍສົມຄວນ ໂດຍ

ມີຈຳນວນບັນຊີຫຼັກຊັບທັງໝົດ ..... ບັນຊີ ຊຶ່ງໃນນັ້ນ ບັນຊີຫຼັກຊັບທີ່ເປັນຂອງຜູ້ລົງທຶນພາຍໃນກວມເອົາ ..... % ແລະ ຜູ້ລົງທຶນຕ່າງປະເທດ ກວມເອົາ ..... % ທີ່ມາຈາກ ..... ປະເທດທົ່ວໂລກ. ຖືໄດ້ວ່າຕະຫຼາດຫຼັກຊັບລາວ ເປັນທາງເລືອກໃໝ່ໃນການລະດົມທຶນໄລຍະຍາວ ໃຫ້ແກ່ຫົວໜ່ວຍວິສາຫະກິດ ແລະ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

ຄຽງຂ້າງກັບດ້ານດີທີ່ໄດ້ກຳນົດໄວ້ໃນຂ້າງເທິງນັ້ນ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ໃນໄລຍະຜ່ານມາຍັງເຫັນວ່າ ມີບາງເນື້ອໃນຍັງບໍ່ທັນເປັນລະບົບຄົບຊຸດ ແລະ ບໍ່ສອດຄ່ອງກັບກົດໝາຍອື່ນ, ບາງເນື້ອໃນຍັງບໍ່ທັນຊັດເຈນ, ຮັດກຸມ ແລະ ບໍ່ແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ແລະ ການເຊື່ອມໂຍງກັບສາກົນ ເທົ່າທີ່ຄວນ ເປັນຕົ້ນ:

1) ການອອກຈຳໜ່າຍຫຼັກຊັບ ຍັງປົນເປກັນ ໂດຍສະເພາະແມ່ນ ເງື່ອນໄຂ, ເອກະສານປະກອບ, ໜັງສືຊວນຊື້ ແລະ ການເປີດເຜີຍຂໍ້ມູນ ສຳລັບ ແຕ່ລະປະເພດຫຼັກຊັບ ເຮັດໃຫ້ຜູ້ມີຄວາມສົນໃຈອອກຈຳໜ່າຍຫຼັກຊັບມີຄວາມຫຍຸ້ງຍາກໃນການກຽມຄວາມພ້ອມ;
2) ກົດໝາຍສະບັບດັ່ງກ່າວຍັງຂາດບາງຂໍ້ກຳນົດທີ່ຈຳເປັນ ເຮັດໃຫ້ບໍ່ສາມາດຮອງຮັບການສ້າງຕັ້ງ ສູນຮັບຝາກຫຼັກຊັບ, ກອງທຶນສ່ວນບຸກຄົນ ແລະ ສະຖາບັນສື່ກາງດ້ານຫຼັກຊັບອື່ນ ທີ່ຍັງບໍ່ທັນຄົບຖ້ວນ;
3) ຕະຫຼາດຫຼັກຊັບລາວ ແລະ ຮັບຝາກຫຼັກຊັບ ຍັງບໍ່ທັນແຍກອອກຈາກກັນຊຶ່ງເຫັນວ່າ ຖ້າອີງຕາມພາລະບົດບາດ ສິດ ແລະ ໜ້າທີ່ຂອງທັງສອງພາກສ່ວນນີ້ແມ່ນມີຄວາມແຕກຕ່າງກັນ ໃນກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງນີ້ຈຶ່ງໄດ້ກຳນົດແຍກເອົາສູນຮັບຝາກຫຼັກຊັບ ອອກໄປກຳນົດເປັນພາກໜຶ່ງສະເພາະຕ່າງຫາກ;
4) ອີງໃສ່ບົດຮຽນຂອງສາກົນ ການຊື້-ຂາຍຫຼັກຊັບ ແລະ ການກະທຳ ທີ່ບໍ່ຍຸຕິທຳ ເປັນບັນຫາທີ່ມີຄວາມລະອຽດອ່ອນ ແລະ ສ້າງຜົນເສຍຫາຍຫຼາຍທີ່ສຸດຕໍ່ຕະຫຼາດທຶນ ແຕ່ພວກເຮົາຍັງບໍ່ໄດ້ລະບຸຢ່າງຈະແຈ້ງໃນກົດໝາຍ;
5) ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນຄະດີກ່ຽວກັບຫຼັກຊັບ ຍັງບໍ່ທັນຮັດກຸມ ແລະ ສອດຄ່ອງກັບເງື່ອນໄຂຂອງການເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ;
6) ການຮ່ວມມືສາກົນກ່ຽວກັບວຽກງານຫຼັກຊັບ ກໍ່ຍັງບໍ່ທັນໄດ້ກຳນົດຈະແຈ້ງ ແລະ ຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ່ການພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານຫຼັກຊັບໃຫ້ມີປະສິດທິຜົນ;
7) ບົດບັນຍັດກ່ຽວກັບຂໍ້ຫ້າມ ກໍ່ຍັງບໍ່ທັນຄົບຖ້ວນ ເປັນຕົ້ນ ຂໍ້ຫ້າມຕໍ່ກັບສະຖາບັນສື່ກາງດ້ານຫຼັກຊັບທີ່ເພີ່ມເຂົ້າໃໝ່ ແລະ ຂໍ້ຫ້າມຕໍ່ກັບນັກວິຊາຊີບທຸລະກິດຫຼັກຊັບ;
8) ສິດ ແລະ ໜ້າທີ່ຂອງ ຄຄຊ ຍັງບໍ່ທັນຮັດກຸມ ແລະ ສອດຄ່ອງກັບເງື່ອນໄຂຂອງການເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ;
9) ບົດບັນຍັດກ່ຽວກັບມາດຕະການ ກໍ່ຍັງບໍ່ທັນຄົບຖ້ວນ ເປັນຕົ້ນ ມາດຕະການຕໍ່ກັບສະຖາບັນສື່ກາງດ້ານຫຼັກຊັບທີ່ເພີ່ມເຂົ້າໃໝ່ ແລະ ມາດຕະການຕໍ່ກັບນັກວິຊາຊີບທຸລະກິດຫຼັກຊັບ;
10) ບັນຫາການໃຫ້ນະໂຍບາຍໃນການສົ່ງເສີມວຽກງານຫຼັກຊັບ ເພື່ອເປັນການດຶງດູດ ແລະ ສ້າງແຮງຈູງໃຈໃຫ້ບຸກຄົນ, ນິຕິບຸກຄົນ ເຂົ້າມາມີສ່ວນຮ່ວມໃນຂົງເຂດວຽກງານຫຼັກຊັບ ກໍ່ຍັງບໍ່ທັນໄດ້ກຳນົດໄວ້ແຈ້ງ.

ດັ່ງນັ້ນ, ຈຶ່ງເຫັນວ່າ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ຕ້ອງໄດ້ຮັບການປັບປຸງຢ່າງຮີບດ່ວນ ເພື່ອໃຫ້ສອດຄ່ອງກັບ ສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ທັງພາຍໃນ, ພາກພື້ນ ແລະ ສາກົນໃນໄລຍະໃໝ່.

### 2.2. ຈຸດປະສົງ

ການປັບປຸງກົດໝາຍວ່າດ້ວຍຫຼັກຊັບຄັ້ງນີ້ ຖືວ່າເປັນການປັບປຸງຄັ້ງທຳອິດ ຫຼັງຈາກທີ່ຖືກຮັບຮອງແຕ່ປີ 2012 ເປັນຕົ້ນມາ ຊຶ່ງມີຈຸດປະສົງອັນຕົ້ນຕໍ ດັ່ງນີ້:

1) ເພື່ອເຮັດໃຫ້ອົງການຄຸ້ມຄອງວຽກງານຫຼັກຊັບ ມີບ່ອນອີງທາງດ້ານນິຕິກຳທີ່ໜັກແໜ້ນກວ່າເກົ່າ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງການເຄື່ອນໄຫວວຽກງານຫຼັກຊັບຫຼາຍຂຶ້ນກວ່າເກົ່າ ພ້ອມທັງ ກາຍເປັນເຄື່ອງມືທີ່ສຳຄັນ ແລະ ໜັກແໜ້ນກວ່າເກົ່າ ໃຫ້ແກ່ອົງການຄຸ້ມຄອງວຽກງານຫຼັກຊັບໃນການຄຸ້ມຄອງ, ຕິດຕາມ, ກວດກາ ກ່ຽວກັບການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ແນໃສ່ເຮັດໃຫ້ວຽກງານດັ່ງກ່າວຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ;
2) ເພື່ອເປັນບ່ອນອີງທາງດ້ານນິຕິກຳໃນ ການສ້າງຕັ້ງສູນຮັບຝາກຫຼັກຊັບ, ກອງທຶນສ່ວນບຸກຄົນ ແລະ ສະຖາບັນສື່ກາງດ້ານຫຼັກຊັບອື່ນ ທີ່ຍັງບໍ່ທັນຄົບຖ້ວນ;
3) ເພື່ອເຮັດໃຫ້ມີນິຕິກຳທີ່ໜັກແໜ້ນ ສອດຄ່ອງເງື່ອນໄຂຕົວຈິງພາຍໃນປະເທດ ແລະ ສາກົນ ໂດຍສະເພາະແມ່ນການກ້າວເຂົ້າເປັນ ສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ພ້ອມທັງເປັນຂໍ້ອຕໍ່ໃຫ້ແກ່ ຄຄຊ ສປປ ລາວ ໃນການຈັດຕັ້ງປະຕິບັດວຽກງານເຊື່ອມໂຍງຕະຫຼາດທຶນໃນຂົງເຂດອາຊຽນ;
4) ເພື່ອສ້າງເງື່ອນໄຂສະດວກ ແລະ ສິ່ງຈູງໃຈໃຫ້ບັນດາຫົວໜ່ວຍວິສາຫະກິດ ສາມາດລະດົມທຶນຜ່ານຕະຫຼາດທຶນ ຊຶ່ງຈະເປັນການເພີ່ມສິນຄ້າໃນຕະຫຼາດຫຼັກຊັບໃຫ້ຫຼາຍຂຶ້ນ, ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ປະກອບສ່ວນລົງທຶນໃນຫຼັກຊັບໃຫ້ຫຼາຍຂຶ້ນ. ພ້ອມດຽວກັນນີ້ ຈະເປັນການສ້າງສິ່ງອຳນວຍຄວາມສະດວກໃນການຊື້-ຂາຍຫຼັກຊັບ ໃນຕະຫຼາດຫຼັກຊັບ;
5) ເພື່ອໃຫ້ມີກົນໄກ ແລະ ເປັນບ່ອນອີງອັນສຳຄັນໃຫ້ແກ່ການ ປ້ອງກັນ ແລະ ແກ້ໄຂ ການຊື້-ຂາຍຫຼັກຊັບ ແລະ ການກະທຳ ທີ່ບໍ່ຍຸຕິທຳ ຢ່າງຈະແຈ້ງ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ ສ້າງຄວາມເຊື່ອໝັ້ນ ແລະ ດຶງດູດ ໃຫ້ຜູ້ລົງທຶນທັງ ພາຍໃນ ແລະ ຕ່າງປະເທດ ເຂົ້າມາມີສ່ວນຮ່ວມໃນຂົງເຂດວຽກງານຫຼັກຊັບນັບມື້ນັບຫຼາຍຂຶ້ນ;
6) ເພື່ອເຮັດໃຫ້ລະບົບກົດໝາຍໃນຂົງເຂດການເງິນຂອງ ສປປ ລາວ ມີຄວາມສົມດູນຂຶ້ນກວ່າເກົ່າ ແລະ ປະກອບສ່ວນເຂົ້າໃນການພັດ ທະນາເສດຖະກິດ-ສັງຄົມຂອງຊາດ ຢ່າງຕັ້ງໜ້າ;
7) ເພື່ອເປັນການປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ VIII ປີ 2016 - 2020.

## 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ

### 3.1. ທາງເລືອກທີ 1: ຮັກສາຕາມສະພາບການໃນປັດຈຸບັນ

ຖ້າຍັງສືບຕໍ່ນຳໃຊ້ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ໂດຍບໍ່ມີການປັບປຸງ ຈະເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍມີຄວາມຫຍຸ້ງຍາກ, ອົງການຄຸ້ມຄອງວຽກງານຫຼັກຊັບ ຈະບໍ່ມີບ່ອນອີງອັນໜັກແໜ້ນໃນການຄຸ້ມຄອງວຽກງານຫຼັກຊັບ ໂດຍສະເພາະແມ່ນ ການຄຸ້ມຄອງ, ຕິດຕາມ, ກວດກາ ກ່ຽວກັບການເຄື່ອນໄຫວວຽກງານຫຼັກຊັບ, ການສ້າງຕັ້ງສູນຮັບຝາກຫຼັກຊັບ, ກອງທຶນສ່ວນບຸກຄົນ ແລະ ສະຖາບັນສື່ກາງດ້ານຫຼັກຊັບອື່ນ ທີ່ຍັງບໍ່ທັນຄົບຖ້ວນ, ບໍ່ສາມາດເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ພ້ອມທັງເປັນຂໍ້ຕໍ່ໃຫ້ແກ່ ຄຄຊ ສປປ ລາວ ພ້ອມທັງສ້າງຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານເຊື່ອມໂຍງຕະຫຼາດທຶນໃນຂົງເຂດອາຊຽນ, ສ້າງຂໍ້ຈຳກັດໃນການຊຸກຍູ້ ແລະ ດຶງດູດ ໃຫ້ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຄື່ອນໄຫວ ແລະ ພັດທະນາວຽກງານຫຼັກຊັບ ເຮັດໃຫ້ການສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກ

ຊັບມີຄວາມຊັກຊ້າ, ຈະເຮັດໃຫ້ບົດບັນຍັດກ່ຽວກັບການອອກຈໍາໜ່າຍຫຼັກຊັບ ບໍ່ຈະແຈ້ງ ແລະ ບໍ່ກວມເອົາບັນດາຜະລິດຕະພັນຕ່າງໆ ເປັນຕົ້ນແມ່ນ ເງື່ອນໄຂ ແລະ ລວມທັງເອກະສານປະກອບຂອງການອອກຈໍາໜ່າຍ, ສະຖາບັນສື່ກາງດ້ານຫຼັກຊັບຈະບໍ່ຄົບຖ້ວນ, ຂາດບົດບັນຍັດກ່ຽວກັບ ກອງທຶນສ່ວນບຸກຄົນ, ການຊື້-ຂາຍຮຸ້ນຂອງບຸກຄົນພາຍໃນ (ESOP), ບໍ່ສາມາດແຍກສູນຮັບຝາກຫຼັກຊັບ ອອກຈາກ ຕະຫຼາດຫຼັກຊັບ ແລະ ໜ້າທີ່ລະຫວ່າງ ສູນຮັບຝາກຫຼັກຊັບ ກັບ ຕະຫຼາດຫຼັກຊັບ ຈະບໍ່ຈະແຈ້ງ, ຂາດເນື້ອໃນກ່ຽວກັບການຊື້-ຂາຍຫຼັກຊັບ ແລະ ການກະທໍາທີ່ບໍ່ຍຸຕິທໍາ, ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນບໍ່ຮັດກຸມ, ຂາດເນື້ອໃນກ່ຽວກັບການພົວພັນສາກົນ, ສິດ ແລະ ໜ້າທີ່ຂອງ ຄຄຊ ຈະບໍ່ໄດ້ຮັບການປັບປຸງ ລວມທັງການແກ້ໄຂຂໍ້ຂັດແຍ່ງ, ມາດຕະການຕໍ່ຜູ້ລະເມີດ ຈະບໍ່ໄດ້ຮັບການປັບປຸງ ແລະ ຂໍ້ຫ້າມ ກໍ່ຍັງບໍ່ທັນກວມເອົາບັນດາບໍລິສັດທີ່ເຄື່ອນໄຫວນອກວັດຖຸປະສົງ ທີ່ຕິດພັນກັບວຽກງານຫຼັກຊັບພ້ອມ.

**ຜົນດີ.**

- ບໍ່ສູນເສຍງົບປະມານຂອງລັດ ທີ່ຈະນໍາໃຊ້ເຂົ້າໃນການປັບປຸງກົດໝາຍວ່າດ້ວຍຫຼັກຊັບ;
- ບໍ່ເສຍເວລາ ໃນການຄົ້ນຄວ້າ ແລະ ທາບທາມຄໍາເຫັນຂອງພາກສ່ວນຕ່າງໆ.

**ຜົນເສຍ.**

- ສືບຕໍ່ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດກົດໝາຍ;
- ເຮັດໃຫ້ການຄຸ້ມຄອງວຽກງານຫຼັກຊັບບໍ່ມີຄວາມຄ່ອງຕົວເທົ່າທີ່ຄວນ;
- ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ຍັງຂາດບາງບົດບັນຍັດທີ່ຈໍາເປັນ ທີ່ບໍ່ສາມາດຮອງຮັບການຂະຫຍາຍຕົວຂອງວຽກງານຫຼັກຊັບໃນໄລຍະປະຈຸບັນ ແລະ ສະເພາະໜ້າ.

### 3.2. ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກໍາ

ຖ້າຫາກວ່າ ບໍ່ມີການປັບປຸງກົດໝາຍສະບັບນີ້ ລັດຖະບານຕ້ອງໄດ້ມີການປັບປຸງກົນໄກທາງດ້ານການບໍລິຫານຂອງທາງພາກລັດໃຫ້ຮັດກຸມ ແລະ ຄົບຊຸດກວ່າເກົ່າ ເພື່ອໃຫ້ສາມາດຄຸ້ມຄອງການຂະຫຍາຍຕົວຂອງວຽກງານຫຼັກຊັບ ໃຫ້ສອດຄ່ອງໃນແຕ່ລະໄລຍະ ແຕ່ວ່າຈະເຮັດໄດ້ຄືແນວນັ້ນແມ່ນມີຄວາມຫຍຸ້ງຍາກ ເພາະວ່າການປັບປຸງກົນໄກການຄຸ້ມຄອງບໍລິຫານໃຫ້ກວມລວມເອົາໝົດທຸກຂົງເຂດວຽກງານ ກໍ່ຕ້ອງໄດ້ມີບ່ອນອີງທາງດ້ານກົດໝາຍເປັນພື້ນຖານ.

**ຜົນດີ.**

- ບໍ່ສູນເສຍງົບປະມານຂອງລັດ ທີ່ຈະນໍາໃຊ້ເຂົ້າໃນການປັບປຸງກົດໝາຍວ່າດ້ວຍຫຼັກຊັບ;
- ບໍ່ເສຍເວລາ ໃນການຄົ້ນຄວ້າ ແລະ ທາບທາມຄໍາເຫັນຂອງພາກສ່ວນຕ່າງໆ.

**ຜົນເສຍ.**

- ລັດຖະບານຈະມີຄວາມຫຍຸ້ງຍາກໃນການຊີ້ນໍາ-ນໍາພາຂະແໜງການ ທັງໃນລະດັບຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເນື່ອງຈາກວ່າບໍ່ມີນິຕິກໍາຮອງຮັບ;
- ນັກລົງທຶນ ປະເພດບຸກຄົນ ແລະ ປະເພດສະຖາບັນ ທັງພາຍໃນ ແລະ ຕ່າງປະເທດ ຈະຂາດຄວາມເຊື່ອໝັ້ນ ຖ້າຫາກວ່າບໍ່ມີການກໍານົດໃນນິຕິກໍາ ຫຼື ບໍ່ມີກົດໝາຍເປັນອັນສະເພາະເພື່ອຮອງຮັບ ແລະ ຈະເຮັດໃຫ້ການຄຸ້ມຄອງວຽກງານຫຼັກຊັບ ບໍ່ມີຄວາມໜັກແໜ້ນເທົ່າທີ່ຄວນ;

– ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ຍັງຂາດບາງບົດບັນຍັດທີ່ຈຳເປັນ ທີ່ບໍ່ສາມາດຮອງຮັບການຂະຫຍາຍຕົວຂອງວຽກງານຫຼັກຊັບໃນໄລຍະປະຈຸບັນ ແລະ ສະເພາະໜ້າ.

### 3.3. ທາງເລືອກທີ 3: ການປັບປຸງກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012

ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ຈະໄດ້ມີການປັບປຸງຄືນກ່ຽວກັບເນື້ອໃນຂອງບາງມາດຕາ ໃຫ້ມີຄວາມຈະແຈ້ງ ແລະ ຄົບຖ້ວນ ຕາມແນວທາງນະໂຍບາຍຂອງລັດຖະບານໃນການສົ່ງເສີມວຽກງານຫຼັກຊັບໃຫ້ຂະຫຍາຍຕົວ ແລະ ມີປະສິດທິຜົນກວ່າເກົ່າ ແນໃສ່ຕອບສະໜອງວິໄສທັດ ຮອດປີ 2030 **"ເປັນຂໍກະແຈໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ"** ຕາມແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ແຕ່ປີ 2016-2025 ທີ່ລັດຖະບານໄດ້ຮັບຮອງ ແລະ ປະກາດໃຊ້ ຕາມດຳລັດສະບັບເລກທີ 79/ລບ, ລົງວັນທີ 10 ມີນາ 2015 ໂດຍມອບໃຫ້ ຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນເຈົ້າການໃນການປະສານສົມທົບ ກັບບັນດາພາກສ່ວນກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດດັ່ງກ່າວໃຫ້ໄດ້ຮັບຜົນດີ ເພື່ອໃຫ້ສາມາດດຶງດູດເອົານັກລົງທຶນເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ລວມທັງການລະດົມທຶນຂອງບັນດາຫົວໜ່ວຍການຜະລິດຕ່າງໆ ຜ່ານລະບົບຕະຫຼາດທຶນໃຫ້ຫຼາຍຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ສ້າງລາຍຮັບຈາກການລະດົມທຶນຜ່ານຕະຫຼາດທຶນໃຫ້ໄດ້ຫຼາຍ ແລະ ເປັນລະບົບໂດຍເນັ້ນໃສ່ຂອດການຄຸ້ມຄອງວຽກງານຫຼັກຊັບໃຫ້ມີຄຸນນະພາບ, ວ່ອງໄວ, ໂປ່ງໃສ ແລະ ຈຳກັດບັນດາດ້ານຫຍໍ້ທໍ້ຕ່າງໆ.

ບັນດາເນື້ອໃນຕົ້ນຕໍຂອງ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ປັບປຸງໃນຄັ້ງນີ້ ມີດັ່ງນີ້:

1. ການອະທິບາຍຄຳສັບ ຍັງບໍ່ທັນຄົບຖ້ວນ ແລະ ຈະແຈ້ງຂຶ້ນ, ໄດ້ເພີ່ມຄຳສັບເຂົ້າໃໝ່ທີ່ຍັງບໍ່ທັນມີ, ລຶບລ້າງບາງຄຳສັບເກົ່າທີ່ເຫັນວ່າບໍ່ຈຳເປັນ;
   - **ຜົນດີ:** ເຮັດໃຫ້ກົດໝາຍສະບັບປັບປຸງນີ້ ມີຄວາມລະອຽດ, ຈະແຈ້ງ, ຄົບຖ້ວນ ຫຼາຍຂຶ້ນ, ການ ນຳໃຊ້ກົດໝາຍມີຄວາມວ່ອງໄວ ແລະ ເປັນເອກະພາບກັນ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ, ເຮັດໃຫ້ຜູ້ລົງທຶນເຂົ້າໃຈງ່າຍໃນການນຳໃຊ້ກົດໝາຍ.
   - **ຜົນເສຍ:** ບໍ່ມີ.
2. ການອອກຈຳໜ່າຍຫຼັກຊັບ ຍັງປົນເປກັນ ໂດຍສະເພາະແມ່ນ ເງື່ອນໄຂ, ເອກະສານປະກອບ, ໜັງສືຊວນຊື້ ແລະ ການເປີດເຜີຍຂໍ້ມູນ ສຳລັບ ແຕ່ລະປະເພດຫຼັກຊັບ ແລະ ເປົ້າໝາຍຜູ້ລົງທຶນ ເຮັດໃຫ້ຜູ້ມີຄວາມສົນໃຈອອກຈຳໜ່າຍຫຼັກຊັບມີຄວາມຫຍຸ້ງຍາກໃນການກຽມຄວາມພ້ອມ ລວມທັງການໃຫ້ນະໂຍບາຍທາງດ້ານອາກອນໃນຂົງເຂດວຽກງານຫຼັກຊັບ;
   - **ຜົນດີ:** ເຮັດໃຫ້ບົດບັນຍັດກ່ຽວກັບການອອກຈຳໜ່າຍຫຼັກຊັບຈະແຈ້ງ ເປັນການສ້າງເງື່ອນໄຂຮອບດ້ານ ເຮັດໃຫ້ບັນດາຫົວໜ່ວຍວິສາຫະກິດ ຈາກທຸກພາກສ່ວນເສດ ຖະກິດ ແລະ ທຸກຂະແໜງການສາມາດລະດົມທຶນຜ່ານຕະຫຼາດທຶນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ຊຶ່ງອີງຕາມແຜນຍຸດທະສາດແມ່ນຮອດປີ 2020 ໃຫ້ມີຈຳນວນບໍລິສັດຈົດທະບຽນ 25-35 ບໍລິສັດ ແລະ ຮອດປີ 2025 ໃຫ້ມີຈຳນວນບໍລິສັດຈົດທະບຽນ 60-80 ບໍລິສັດ.
   - **ຜົນເສຍ:** ຖືວ່າມີຄວາມທ້າທາຍບໍ່ໜ້ອຍທີ່ຈະລະດົມບໍລິສັດເຂົ້າຈົດທະບຽນໃຫ້ໄດ້ຕາມຈຳນວນຕົວເລກທີ່ກ່າວມານັ້ນ ເນື່ອງຈາກວ່າ ຄວາມຮັບຮູ້, ຄວາມເຂົ້າໃຈ ກ່ຽວກັບຜົນປະໂຫຍດຂອງການລະດົມທຶນ ແລະ ການລົງທຶນໃນຕະຫຼາດທຶນຂອງ ບັນດາບຸກຄົນ, ນິຕິບຸກຄົນ ຍັງບໍ່ທັນເລິກເຊິ່ງ, ບັນດາກົດໝາຍທີ່ປົ່ນອ້ອມວຽກງານຫຼັກຊັບ ຈຳນວນໜຶ່ງຍັງບໍ່ທັນສົ່ງເສີມວຽກງານຫຼັກຊັບຢ່າງຕັ້ງໜ້າ

ເປັນຕົ້ນ ກົດໝາຍວ່າດ້ວຍວິສາຫະກິດ ຍັງບໍ່ທັນບັນຈຸບັນດາຂໍ້ກຳນົດກ່ຽວກັບການຈັດຕັ້ງ, ການຄຸ້ມຄອງບໍລິຫານ ແລະ ການເຄື່ອນ ໄຫວຂອງບໍລິສັດມະຫາຊົນ ຢ່າງລະອຽດຈະແຈ້ງ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ ເຖິງວ່າມີການປັບປຸງ ແລະ ເພີ່ມນະໂຍບາຍອາກອນເພື່ອສົ່ງເສີມການຈົດທະບຽນແຕ່ກໍ່ບໍ່ທັນພຽງພໍ. ອີກຢ່າງໜຶ່ງການກະຕຸກຍຸກຍູ້ບໍລິສັດໃຫ້ລະດົມທຶນຜ່ານລະບົບຕະຫຼາດທຶນ ຖ້າຈະເອື່ອຍອີງໃສ່ແຕ່ນະໂຍບາຍຈາກລັດຖະບານພຽງຢ່າງດຽວແມ່ນບໍ່ພຽງພໍ ສະນັ້ນ ບັນດາຜູ້ຖືຮຸ້ນ ແລະ ຜູ້ອຳນວຍການຂອງບໍລິສັດດັ່ງກ່າວຕ້ອງມີຄວາມຕື່ນຕົວ ແລະ ເປັນເຈົ້າການຢ່າງແທ້ຈິງ ຈຶ່ງຈະເຮັດໃຫ້ການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບມີຜົນສຳເລັດ.

3. ການຄຸ້ມຄອງບໍລິຫານກິດຈະການທີ່ດີ (CG) ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ໂດຍສະເພາະແມ່ນ ໂຄງປະກອບ ແລະ ເງື່ອນໄຂຂອງສະພາບໍລິຫານ (BOD), ການຄອບຄອງກິດຈະການ (Take over), ລາຍການທີ່ກ່ຽວພັນ (RPT) ແລະ ການໄດ້ມາ ແລະ ການເສຍໄປຂອງຊັບສິນ ຊຶ່ງເຫັນວ່າເປັນບັນຫາສຳຄັນທີ່ສຸດສຳລັບການຈົດທະບຽນ ແຕ່ຍັງບໍ່ທັນໄດ້ກຳນົດໄວ້ຈະແຈ້ງ ແລະ ຄົບຖ້ວນເທື່ອ;
   - **ຜົນດີ:** ເຮັດໃຫ້ການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ມີປະສິດທິພາບ ແລະ ມີຄວາມໂປ່ງໃສຫຼາຍຂຶ້ນ.
   - **ຜົນເສຍ:** ອາດມີຜົນກະທົບໃນໄລຍະສັ້ນເທົ່ານັ້ນຕໍ່ກັບການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນທີ່ຕ້ອງໄດ້ເພີ່ມທະວີຂອງການດຳເນີນບັນດາວຽກງານດັ່ງກ່າວ ແຕ່ພາຍຫຼັງກັບເຂົ້າສູ່ສະພາບປົກກະຕິແລ້ວ ການເຄື່ອນໄຫວວຽກງານກໍ່ຈະມີຄວາມຄ່ອງຕົວຫຼາຍຂຶ້ນ ເພາະວ່າບໍ່ແມ່ນການສ້າງກົນໄກໃໝ່ ແຕ່ແມ່ນການນຳເອົາກົນໄກທີ່ເຄີຍໃຊ້ຜ່ານມາແລ້ວມາໝູນໃຊ້ຄືນເທົ່ານັ້ນ.

4. ກອງທຶນສ່ວນບຸກຄົນ ເພື່ອຕອບສະໜອງຄວາມຕ້ອງການຕົວຈິງຂອງຜູ້ລົງທຶນ ຊຶ່ງຜ່ານມາກໍ່ມີຜູ້ທີ່ມີຄວາມສົນໃຈມາຂໍສ້າງຕັ້ງກອງທຶນປະເພດນີ້ ແຕ່ເຮົາບໍ່ທັນມີນິຕິກຳຮອງຮັບ. ກອງທຶນປະເພດນີ້ຈະລົງທຶນໃນທຸລະກິດໃດໜຶ່ງ ເມື່ອທຸລະກິດດັ່ງກ່າວເຂັ້ມແຂງແລ້ວ ຈະນຳບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ລວມທັງການອອກຈຳໜ່າຍໜ່ວຍລົງທຶນ ຊຶ່ງບັນຫານີ້ກໍ່ຍັງບໍ່ທັນໄດ້ກຳນົດໄວ້ເທື່ອ;
   - **ຜົນດີ:** ເພື່ອສ້າງເງື່ອນໄຂໃຫ້ຜູ້ລົງທຶນລາຍຍ່ອຍ, ຜູ້ລົງທຶນທີ່ຂາດຄວາມຮູ້ ແລະ ຄວາມເຂົ້າໃຈໃນການລົງທຶນໃນຫຼັກຊັບ ໃຫ້ສາມາດປະກອບສ່ວນຊື້-ຂາຍຫຼາຍຫຼັກຊັບຂຶ້ນ ໂດຍມີຜູ້ບໍລິຫານກອງທຶນສ່ວນບຸກຄົນທີ່ເປັນມືອາຊີບ ມາເປັນຜູ້ບໍລິຫານໃຫ້ ຊຶ່ງໃນຕົວຈິງ ຢູ່ ສປປ ລາວ ຜູ້ລົງທຶນປະເພດບຸກຄົນທີ່ມີທຶນຮອນຫຼາຍ ແລະ ຕ້ອງການລົງທຶນໃຫ້ເປັນໄປຕາມວັດຖຸປະສົງຂອງຕົນ ແຕ່ບໍ່ມີເວລາ, ບໍ່ຄວາມຮູ້ ແລະ ບໍ່ປະສົບການລົງທຶນໃນຫຼັກຊັບ ກໍ່ມີຄວາມສົນໃຈ ແລະ ຕ້ອງການລົງທຶນ ໂດຍໃຊ້ຊ່ອງທາງການລົງທຶນຜ່ານກອງທຶນສ່ວນບຸກຄົນ ຊຶ່ງກອງທຶນດັ່ງກ່າວ ໄດ້ໃຫ້ສິດແກ່ຜູ້ລົງທຶນບຸກຄົນ ໃນການກຳນົດນະໂຍບາຍການລົງທຶນ ແລະ ຜົນຕອບແທນທີ່ຜູ້ກ່ຽວຕ້ອງການໄດ້ ໂດຍຜູ້ບໍລິຫານກອງທຶນສ່ວນບຸກຄົນ ຫຼື ບໍລິສັດບໍລິຫານຊັບສິນ ຕ້ອງບໍລິຫານກອງທຶນ ໃຫ້ບັນລຸຕາມນະໂຍບາຍທີ່ຜູ້ລົງທຶນດັ່ງກ່າວຕ້ອງການ.
   - **ຜົນເສຍ:** ອົງການຄຸ້ມຄອງຕ້ອງໄດ້ສ້າງນິຕິກຳເພື່ອຜັນຂະຫຍາຍ ແລະ ຮອງຮັບໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງ ກອງທຶນສ່ວນບຸກຄົນ.

5. ສະຖາບັນສື່ກາງດ້ານຫຼັກຊັບຍັງບໍ່ທັນໄດ້ກຳນົດໄວ້ຢ່າງຄົບຖ້ວນ "ບໍລິສັດປະເມີນມູນຄ່າຊັບສິນ" ເພື່ອຮອງຮັບການອອກຈຳໜ່າຍຮຸ້ນກູ້ ເພື່ອເປັນການເພີ່ມຜະລິດຕະພັນໃນຕະຫຼາດຫຼັກຊັບລາວ ກໍ່ຍັງບໍ່ທັນໄດ້ກ່າວເຖິງ;

- **ຜົນດີ:** ເຮັດໃຫ້ສະຖາບັນສື່ກາງດ້ານຫຼັກຊັບມີຄວາມຄົບຖ້ວນ ແລະ ສົມບູນຫຼາຍຂຶ້ນ ແລະ ເຮັດໃຫ້ອົງ ການຄຸ້ມຄອງ ມີບ່ອນອີງໃນການຕິດຕາມ ແລະ ກວດກາ.
- **ຜົນເສຍ:** ອົງການຄຸ້ມຄອງຕ້ອງໄດ້ສ້າງນິຕິກຳເພື່ອຜັນຂະຫຍາຍ ແລະ ຮອງຮັບໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງ ບໍລິສັດປະເມີນມູນຄ່າຊັບສິນ.

6. ນັກວິຊາຊີບທຸລະກິດຫຼັກຊັບ ຊຶ່ງເປັນຜູ້ທີ່ມີຄວາມສຳຄັນທີ່ເຮັດໜ້າທີ່ໃນ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນ ກໍ່ຍັງບໍ່ທັນໄດ້ກຳນົດພາລະບົດບາດໄວ້ຈະແຈ້ງເທື່ອ;
   - **ຜົນດີ:** ເພື່ອເຮັດໃຫ້ການເຄື່ອນໄຫວຂອງນັກວິຊາຊີບທຸລະກິດຫຼັກຊັບມີປະສິດທິຜົນຫຼາຍກວ່າເກົ່າ ແລະ ເປັນການແຍກເອົາບົດບັນຍັດຂອງນັກວິຊາຊີບໄປກຳນົດເປັນພາກໜຶ່ງ ຍ້ອນວ່າ ນັກວິຊາຊີບທຸລະກິດຫຼັກຊັບ ແມ່ນບໍ່ໄດ້ມີຢູ່ແຕ່ບໍລິສັດຫຼັກຊັບຢ່າງດຽວ.
   - **ຜົນເສຍ:** ບໍ່ມີ.
7. ຕະຫຼາດຫຼັກຊັບລາວ ຍັງເຮັດໜ້າທີ່ ທັງຊື້-ຂາຍ ແລະ ຮັບຝາກຫຼັກຊັບ ຊຶ່ງເຫັນວ່າຍັງບໍ່ຮັບປະກັນຄວາມສ່ຽງກໍລະນີຫາກປິດການດຳເນີນງານ ຈະເຮັດໃຫ້ບໍ່ສາມາດຊຳລະຫຼັກຊັບໄດ້. ນອກຈາກນີ້ ຖ້າແຍກສູນຮັບຝາກຫຼັກຊັບອອກຕ່າງຫາກ ລັດຖະບານສາມາດນຳເອົາພັນທະບັດຂອງຕົນໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ ໂດຍບໍ່ກັງວົນຕໍ່ການຮົ່ວໄຫຼຂອງຄວາມລັບ ຊຶ່ງວຽກງານດັ່ງກ່າວ ໄດ້ກຳນົດໄວ້ໃນແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ແຕ່ປີ 2016-2025 ໂຄງການທີ 5 ແຜນງານທີ 5.2 ແມ່ນຕ້ອງໄດ້ແຍກສູນຮັບຝາກອອກເປັນນິຕິບຸກຄົນໜຶ່ງ ພາຍໃນປີ 2018 ດັ່ງນັ້ນ, ໃນກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງນີ້ ຈຶ່ງໄດ້ກຳນົດແຍກເອົາສູນຮັບຝາກຫຼັກຊັບ ອອກໄປກຳນົດເປັນພາກໜຶ່ງສະເພາະຕ່າງຫາກ;
   - **ຜົນດີ:** ເຮັດໃຫ້ພາລະບົດບາດ ແລະ ໜ້າທີ່ ແຍກອອກຈາກກັນລະຫວ່າງ ຕະຫຼາດຫຼັກຊັບ ແລະ ສູນຮັບຝາກຫຼັກຊັບ ເນື່ອງຈາກວ່າ ທັງສອງພາກສ່ວນແມ່ນເຮັດໜ້າທີ່ແຕກຕ່າງກັນ.
   - **ຜົນເສຍ:** ອົງການຄຸ້ມຄອງຕ້ອງໄດ້ສ້າງນິຕິກຳເພື່ອຜັນຂະຫຍາຍ ແລະ ຮອງຮັບໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງ ສູນຮັບຝາກຫຼັກຊັບ.
8. ອີງໃສ່ບົດຮຽນຂອງສາກົນ ການຊື້-ຂາຍຫຼັກຊັບ ແລະ ການກະທຳ ທີ່ບໍ່ຍຸຕິທຳ ເປັນບັນຫາທີ່ມີຄວາມລະອຽດອ່ອນ ແລະ ສ້າງຜົນເສຍຫາຍຫຼາຍທີ່ສຸດຕໍ່ຕະຫຼາດທຶນ ແຕ່ພວກເຮົາຍັງບໍ່ໄດ້ລະບຸຢ່າງຈະແຈ້ງໃນກົດໝາຍ ໂດຍສະເພາະແມ່ນ ການປັ່ນຕະຫຼາດ, ການນຳໃຊ້ຂໍ້ມູນພາຍໃນເພື່ອຊື້-ຂາຍຫຼັກຊັບ, ການຕົວະຍົວະຫຼອກລວງເພື່ອໃຫ້ຊື້-ຂາຍຫຼັກຊັບ, ການສ້າງ ສະໜອງ ຫຼື ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບຫຼັກຊັບທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ, ການປອມແປງເອກະສານລາຍງານການເງິນ ແລະ ເອກະສານອື່ນທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ແລະ ການທຳລາຍ ເຊື່ອງອຳ ຂໍ້ມູນ, ເອກະສານ, ຂອງກາງ ແລະ ຂັດຂວາງ ຫຼື ບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນ. ຊຶ່ງເນື້ອໃນດັ່ງກ່າວເຫັນວ່າມີຄວາມສຳຄັນ ແລະ ເຫັນວ່າ ມີຄວາມຈຳເປັນທີ່ຈະຕ້ອງເພີ່ມພາກດັ່ງກ່າວນີ້ ເຂົ້າຕື່ມ;
   - **ຜົນດີ:** ເປັນການປ້ອງກັນພຶດຕິກຳທີ່ຖືວ່າເປັນການຊື້-ຂາຍຫຼັກຊັບ ແລະ ການກະທຳທີ່ບໍ່ຍຸຕິທຳ ໃນຂົງເຂດວຽກງານຫຼັກຊັບ ແລະ ເປັນບ່ອນອີງໃນການປະຕິບັດມາດຕະການຕໍ່ກັບບັນດາພຶດຕິກຳດັ່ງກ່າວ ຮັບປະກັນໃຫ້ການຄຸ້ມຄອງວຽກງານຫຼັກຊັບ ມີຄວາມເຂັ້ມແຂງ, ແນໃສ່ສ້າງເຄື່ອງມື ແລະ ກົນໄກໃນການຄຸ້ມຄອງວຽກງານຫຼັກຊັບໃຫ້ຄ່ອງຕົວ ແລະ ມີປະສິດທິຜົນສູງ ກຳຈັດບັນດາປະກົດການຫຍໍ້ທໍ້ຕ່າງໆໃນຂົງເຂດວຽກງານຫຼັກຊັບ.
   - **ຜົນເສຍ:** ບໍ່ມີ.

9. ປັບປຸງບົດບັນຍັດກ່ຽວກັບ ການສືບສວນ-ສອບສວນຄະດີກ່ຽວກັບຫຼັກຊັບ ຄືນໃໝ່ ໂດຍໃຫ້ມີການປະສານສົມທົບກັນລະຫວ່າງ ພະນັກງານຈາກອົງການຄຸ້ມຄອງຫຼັກຊັບ ປະສານສົມທົບກັບ ພະນັກງານຈາກກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນອື່ນກໍ່ໄດ້ ເພື່ອເປັນເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ ໃຫ້ມີປະສິດຕິພາບ ແລະ ສອດຄ່ອງກັບສະພາບການຕົວຈິງໃນປະຈຸບັນ;
   - **ຜົນດີ:** ເຮັດໃຫ້ການກຳນົດກ່ຽວກັບເຈົ້າໜ້າທີ່ສືບສວນ-ສອບສວນຮັດກຸມຂຶ້ນ ໂດຍໃຫ້ມີການປະສານສົມທົບກັບເຈົ້າໜ້າທີ່ກັບພາກສ່ວນອື່ນໃນກໍລະນີຈຳເປັນ, ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນໄດ້ຮັບການປັບປຸງໃຫ້ຮັດກຸມຫຼາຍຂຶ້ນ.
   - **ຜົນເສຍ:** ປະສົບການໃນການຕິດຕາມກວດກາຫົວໜ່ວຍທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຍັງອ່ອນນ້ອຍ ລວມທັງບົດຮຽນໃນການສືບສວນ-ສອບສວນບໍ່ທັນມີຫຼາຍ, ບຸກຄະລາກອນໃນການຄຸ້ມຄອງຍັງມີລັກສະນະຈຳກັດທາງດ້ານຈຳນວນ ແລະ ຄວາມຮູ້ຄວາມສາມາດ ແລະ ອົງການຄຸ້ມຄອງຕ້ອງໄດ້ສ້າງນິຕິກຳເພື່ອຮອງຮັບໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ.

10. ປັບປຸງເນື້ອໃນກ່ຽວກັບການພົວພັນສາກົນ ໂດຍກຳນົດໃຫ້ເປັນພາກໃໝ່ສະເພາະທີ່ກຳນົດຂອດ ການຮ່ວມມືສາກົນກ່ຽວກັບວຽກງານຫຼັກຊັບ ເພື່ອໃຫ້ມີເນື້ອໃນຈະແຈ້ງ ແລະ ຮັດກຸມ ເປັນບ່ອນອີງໃຫ້ແກ່ການພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານຫຼັກຊັບໃຫ້ມີປະສິດທິຜົນ ຊຶ່ງຮຽກຮ້ອງໃຫ້ ຄຄຊ ສປປ ລາວ ຕ້ອງເປັນສະມາຊິກ ອົງການຄຸ້ມຄອງຫຼັກຊັບສາກົນ (International Organization for Securities Commission: IOSCO) ເພື່ອໃຫ້ ຄຄຊ ມີເງື່ອນໄຂຈັດຕັ້ງປະຕິບັດໜ້າວຽກຕ່າງໆ ກ່ຽວກັບວຽກງານຕະຫຼາດທຶນ (ASEAN Capital Market Activities);
   - **ຜົນດີ:** ເຮັດໃຫ້ສອດຄ່ອງກັບຫຼັກການຂອງສາກົນ ໂດຍສະເພາະແມ່ນການກະກຽມເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (**IOSCO**) ຕອບສະໜອງໃຫ້ແກ່ວຽກງານການເຊື່ອມໂຍງໃນຂົງເຂດວຽກງານຫຼັກຊັບໃນກອບອາຊຽນ, ພາກພື້ນ ແລະ ສາກົນ. ເຮັດໃຫ້ວຽກງານການພົວພັນຮ່ວມມືກັບສາກົນສູງເດັ່ນຂຶ້ນອີກບາດກ້າວໜຶ່ງ ຕໍ່ໜ້າເວທີສາກົນ ເນື່ອງຈາກວ່າ ມີກົດໝາຍຮອງຮັບວຽກງານດັ່ງກ່າວຢ່າງຈະແຈ້ງ.
   - **ຜົນເສຍ:** ບໍ່ມີ. ແຕ່ອົງການຄຸ້ມຄອງວຽກງານຫຼັກຊັບ ຕ້ອງສ້າງກົນໄກໃນການພົວພັນຮ່ວມມືກັບ ພາກພື້ນ ແລະ ສາກົນໃຫ້ຄ່ອງຕົວຫຼາຍຂຶ້ນກວ່າເກົ່າ ເພື່ອເຮັດໃຫ້ວຽກງານຮ່ວມມືສາກົນມີປະສິດທິພາບສູງ.

11. ປັບປຸງບົດບັນຍັດກ່ຽວກັບ ຂໍ້ຫ້າມ ຄືນໃໝ່ເພື່ອໃຫ້ຄົບຖ້ວນກວ່າເກົ່າ ລວມທັງ ຂໍ້ຫ້າມເກົ່າທີ່ມີຢູ່ແລ້ວ ແລະ ເພີ່ມຂໍ້ຫ້າມເຂົ້າໃໝ່ ຕໍ່ກັບ ສະຖາບັນສື່ກາງດ້ານຫຼັກຊັບ ທີ່ໄດ້ເພີ່ມເຂົ້າໃໝ່;
   - **ຜົນດີ:** ເຮັດໃຫ້ໃຫ້ບົດບັນຍັດກ່ຽວກັບຂໍ້ຫ້າມຄົບຖ້ວນ ແລະ ສົມບູນຂຶ້ນກວ່າເກົ່າ ແລະ ເຮັດໃຫ້ການເຄື່ອນໄຫວຂອງບັນດາສະຖາບັນສື່ກາງດ້ານຫຼັກຊັບ, ຕະຫຼາດຫຼັກຊັບ, ນັກວິຊາຊີບທຸລະກິດຫຼັກຊັບ, ສະມາຄົມທຸລະກິດຫຼັກຊັບ, ຄຄຊ ແລະ ສຄຄຊ ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.
   - **ຜົນເສຍ:** ບໍ່ມີ.

12. ປັບປຸງບົດບັນຍັດກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຄືນໃໝ່ ໂດຍໄດ້ຕັດເນື້ອໃນກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງໂດຍ ຄຄຊ ອອກ ແລ້ວມອບໃຫ້ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເຮັດໜ້າທີ່ແກ້ໄຂຂໍ້ຂັດ

ແຍ່ງກ່ຽວກັບວຽກງານຫຼັກຊັບ ເພື່ອໃຫ້ການແກ້ໄຂຂໍ້ຂັດແຍ່ງ ມີປະສິດຕິພາບ ແລະ ສອດຄ່ອງກັບສະພາບການຕົວຈິງໃນປະຈຸບັນ;

- **ຜົນດີ:** ເຮັດໃຫ້ລະບົບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີລັກສະນະລວມສູນຫຼາຍຂຶ້ນ ແລະ ຖືກຮັບຜິດຊອບໂດຍອົງການກ່ຽວຂ້ອງສະເພາະ ອີກຢ່າງໜຶ່ງຂໍ້ຂັດແຍ່ງໃນຂົງເຂດວຽກງານຫຼັກຊັບ ກໍ່ແມ່ນນອນໃນຂອບເຂດການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດຂອງ ສກສ ແລະ ມີກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຮອງຮັບແລ້ວ, ມີລະບົບ, ກົນໄກ ແລະ ປະສົບການໃນການແກ້ໄຂຂໍ້ຂັດແຍ່ງສູງ.
- **ຜົນເສຍ:** ບໍ່ມີ. ແຕ່ອົງການຄຸ້ມຄອງວຽກງານຫຼັກຊັບ ຕ້ອງໄດ້ຄົ້ນຄວ້າບຸກຄະລາກອນທີ່ມີ ຄວາມຮູ້ ຄວາມສາມາດ ແລະ ປະສົບການໃນຂົງເຂດວຽກງານຫຼັກຊັບ ເພື່ອສະເໜີຕໍ່ກະຊວງຍຸຕິທຳ ແລະ ບັນຈຸລາຍຊື່ບຸກຄົນດັ່ງກ່າວເຂົ້າໃນລາຍຊື່ຂອງ ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນຂອງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

13. ໄດ້ປັບປຸງບົດບັນຍັດການຄຸ້ມຄອງ ແລະ ການກວດກາວຽກງານຫຼັກຊັບ ເພື່ອໃຫ້ເນື້ອໃນໃຫ້ຄົບຖ້ວນຂຶ້ນກວ່າເກົ່າ ເປັນຕົ້ນແມ່ນ ສິດ ແລະ ໜ້າທີ່ຂອງ ຄຄຊ ແລະ ຈັນຍາບັນຂອງ ຄຄຊ ໄດ້ຮັບການປັບປຸງໃຫ້ຈະແຈ້ງ. ນອກຈາກນັ້ນ ໄດ້ເພີ່ມ 2 ຄະນະກຳມະການເຂົ້າໃສ່ຕື່ມ ຄື:
   1) ຄະນະກຳມະການພິຈາລະນາການອອກຈຳໜ່າຍຫຼັກຊັບ ເພື່ອຮັບປະກັນໃຫ້ມີການຄົ້ນຄວ້າການອອກຈຳໜ່າຍຫຼັກຊັບ ມີຄວາມລະອຽດຮອບຄອບ ແລະ ເລິກເຊິ່ງກ່ອນສະເໜີຕໍ່ ກອງປະຊຸມ ຄຄຊ ພິຈາລະນາ ເພື່ອຮັບປະກັນທາງດ້ານເວລາ, ຄວາມເປັນເອກະພາບ, ສ້າງຄວາມເຊື່ອໝັ້ນ, ໂປ່ງໃສ ແລະ ຍຸຕິທຳ ຂອງລະບົບຕະຫຼາດທຶນ;
   2) ຄະນະກຳມະການພິຈາລະນາມາດຕະການທາງບໍລິຫານ ເພື່ອກວດກາຄືນຜົນການກວດກາ ພ້ອມທັງພິຈາລະນາມາດຕາການທາງບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ແນໃສ່ເຮັດໃຫ້ການນຳໃຊ້ມາດຕະການສອດຄ່ອງກັບການລະເມີດ.

- **ຜົນດີ:** ເຮັດໃຫ້ ສິດ ແລະ ໜ້າທີ່ຂອງ ຄຄຊ ໄດ້ຮັບການປັບປຸງ ແລະ ຮັດກຸມຫຼາຍຂຶ້ນສອດຄ່ອງກັບຫຼັກການຂອງສາກົນ, ການເພີ່ມ 2 ຄະນະກຳມະການເຂົ້າໃໝ່ນັ້ນຈະເຮັດໃຫ້ຮັບປະກັນໃຫ້ມີການຄົ້ນຄວ້າຢ່າງເລິກເຊິ່ງກ່ຽວກັບການອອກຈຳໜ່າຍຫຼັກຊັບ ກ່ອນຈະສະເໜີຕໍ່ ຄຄຊ ພິຈາລະນາ ລວມທັງເປັນການຮັບປະກັນ ຄວາມເປັນເອກະພາບ, ສ້າງຄວາມເຊື່ອໝັ້ນ, ໂປ່ງໃສ ແລະ ຍຸຕິທຳ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ມີສ່ວນຮ່ວມ, ສ້າງຄວມໂປ່ງໃສ ແລະ ຍຸຕິທຳ.
- **ຜົນເສຍ:** ເຮັດໃຫ້ຂອດການພິຈາລະນາຕັດສິນວຽກງານຂອງ ຄຄຊ ແກ່ຍາວເວລາຫຼາຍຂຶ້ນ ເນື່ອງຈາກວ່າ ຕ້ອງໄດ້ຜ່ານການຄົ້ນຄວ້າພິຈາລະນາຂອງ ຄະນະກຳມະການຍ່ອຍຂອງ ຄຄຊ ເສຍກ່ອນ ຈຶ່ງສົ່ງໃຫ້ ຄຄຊ ພິຈາລະນາຮັບຮອງ.

14. ມາດຕະການຕໍ່ຜູ້ລະເມີດ ໄດ້ປັບປຸງມາດຕະການປັບໃໝໃຫ້ຄົບຖ້ວນຂຶ້ນກວ່າເກົ່າ ນອກຈາກນັ້ນ ໄດ້ກຳນົດໃຫ້ພຶດຕິກຳຈຳນວນໜຶ່ງ ເປັນຕົ້ນ: ການປັ່ນຕະຫຼາດ, ການນຳໃຊ້ຂໍ້ມູນພາຍໃນເພື່ອການຊື້-ຂາຍຫຼັກຊັບ, ການຕົວະຍົວະຫຼອກລວງເພື່ອໃຫ້ຊື້-ຂາຍຫຼັກຊັບ ເປັນການກະທຳຜິດທາງອາຍາ;

- **ຜົນດີ:** ເຮັດໃຫ້ມີບ່ອນອີງທາງດ້ານກົດໝາຍໃນການປະຕິບັດມາດຕະການຕໍ່ກັບການລະເມີດໃນກໍ ລະນີດັ່ງກ່າວ ເນື່ອງຈາກວ່າການກະທຳເຫຼົ່ານັ້ນ ລ້ວນແຕ່ເປັນສິ່ງລະອຽດອ່ອນ ແລະ ມີຄວາມອ່ອນໄຫວສູງ ຊຶ່ງສາມາດສ້າງຄວາມເສຍຫາຍຢ່າງຫຼວງຫຼາຍໃຫ້ແກ່ລະບົບຕະຫຼາດທຶນ ພ້ອມທັງສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ ທີ່ເຂົ້າມາລົງທຶນໃນຕະຫຼາດຫຼັກຊັບ.

➢ **ຜົນເສຍ:** ບໍ່ມີ. ແຕ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງໄດ້ສຶກສາຄົ້ນຄວ້າທຳຄວາມເຂົ້າໃຈກ່ຽວກັບບັນດາພຶດຕິກຳຕ່າງໆເຫຼົ່ານັ້ນໃຫ້ລະອຽດຈະແຈ້ງ ເພື່ອເຮັດໃຫ້ການວິເຄາະອົງປະກອບຂອງການກະທຳຜິດໄດ້ຢ່າງຖືກຕ້ອງ.

### 3.4. ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກຳ

#### 3.4.1. ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ

ການເລືອກເອົາວິທີການໃນການ ປັບປຸງກົດໝາຍວ່າດ້ວຍຫຼັກຊັບ ແມ່ນຖືວ່າເປັນວິທີທີ່ດີທີ່ສຸດໃນການແກ້ໄຂບັນຫາທີ່ເກີດຂຶ້ນ ຖ້າວ່າທຽບໃສ່ກັບ 2 ທາງເລືອກທີ່ໄດ້ກ່າວມານັ້ນ. ເນື່ອງຈາກວ່າ ການປັບປຸງກົດໝາຍວ່າດ້ວຍຫຼັກຊັບ ໃນຄັ້ງນີ້ຈະໄດ້ມີການປັບປຸງຄືນບັນດາ ມາດຕາທີ່ຍັງບໍ່ທັນສອດຄ່ອງ, ເນື້ອໃນທີ່ຍັງຄຸມເຄືອ, ບໍ່ຈະແຈ້ງ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ພ້ອມທັງເປັນການແກ້ໄຂຂໍ້ອັດຕັນ ແລະ ກົດໜ່ວງຖ່ວງດຶງການຂະຫຍາຍຕົວ ເພື່ອໃຫ້ເນື້ອໃນມີຄວາມສອດຄ່ອງກັບສະພາບການຕົວຈິງຂອງການຂະຫຍາຍຕົວຂອງວຽກງານຫຼັກຊັບ. ຍ້ອນເຫດຜົນທີ່ກ່າວມານີ້ ທະນາຄານແຫ່ງ ສປປ ລາວ ກໍ່ຄືຄະນະຮັບຜິດຊອບຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບ ຈຶ່ງເລືອກເອົາ ການປັບປຸງກົດໝາຍວ່າດ້ວຍຫຼັກຊັບ (ທາງເລືອກທີ 3) ເປັນວິທີການແກ້ໄຂບັນຫາ.

ນິຕິກຳທີ່ຈະສ້າງ ຫຼື ປັບປຸງ ນອນຢູ່ໃນປະເພດນິຕິກຳທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກຳບໍ່?

☑ ແມ່ນ ☐ ບໍ່ແມ່ນ

#### 3.4.2. ການປັບປຸງຮ່າງນິຕິກຳ

ຜົນການປະເມີນການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວໃນໄລຍະຜ່ານມາ ໄດ້ກຳນົດໄວ້ໃນເອກະສານຄັດຕິດມາພ້ອມນີ້.

#### 3.4.3. ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ

ນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ຈະຈຳກັດການແຂ່ງຂັນທາງທຸລະກິດໃນ ສປປ ລາວ ຫຼື ບໍ່?

☐ ຈາກັດ ☑ ບໍ່ຈຳກັດ

ຖ້າມີການຈຳກັດ, ກະລຸນາອະທິບາຍວ່າຈະມີການຈຳກັດການແຂ່ງຂັນທາງທຸລະກິດຄືແນວໃດ ແລະ ຍ້ອນຫຍັງ.

#### 3.4.4. ພັນທະຕໍ່ສາກົນ

ຮ່າງນິຕິກຳ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼືບໍ່? ☑ ແມ່ນ ☐ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☑ WTO ☐AEC ☐FTA ☑ ອື່ນໆ (ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ ຫຼື IOSCO, ຈັດຕັ້ງປະຕິບັດໜ້າວຽກຕ່າງໆ ກ່ຽວກັບວຽກງານຕະຫຼາດທຶນ ຫຼື ASEAN Capital Market Activities)

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງມີຄວາມສອດຄ່ອງກັບພັນທະສາກົນນັ້ນ ຫຼື ບໍ່?

☑ ສອດຄ່ອງ ☐ບໍ່ສອດຄ່ອງ

ຖ້າບໍ່ສອດຄ່ອງ, ກະລຸນາອະທິບາຍແຈ້ງ.

### 3.4.5. ນິຕິກຳ ທີ່ພົວພັນ

ບັນດານິຕິກຳທີ່ພົວພັນກັບຮ່າງນິຕິກຳທີ່ສະເໜີປັບປຸງ ມີດັ່ງນີ້:

1. ກົດໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
2. ກົດໝາຍວ່າດ້ວຍ ສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
3. ກົດໝາຍວ່າດ້ວຍ ການຕ້ານ, ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 49/ສພຊ, ລົງວັນທີ 21 ກໍລະກົດ 2014;
4. ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ (ສະບັບປັບປຸງ) ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
5. ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 06/ສພຊ, ລົງວັນທີ 17 ທັນວາ 2010;
6. ກົດໝາຍວ່າດ້ວຍ ທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
7. ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
8. ກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
9. ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 4 ກໍລະກົດ 2012;
10. ກົດໝາຍວ່າດ້ວຍ ການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
11. ກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
12. ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
13. ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ) ສະບັບເລກທີ 17/ສພຊ, ລົງວັນທີ 10 ກໍລະກົດ 2012;
14. ກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
15. ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບເລກທີ 01/ສພຊ, ລົງວັນທີ 8 ທັນວາ 2008;
16. ກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
17. ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017.

ນອກຈາກບັນດານິຕິກຳທີ່ໄດ້ກ່າວມານັ້ນ ຄະນະຮັບຜິດຊອບຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບ ຍັງໄດ້ຄົ້ນຄວ້າບັນດາແນວທາງຂອງພັກ, ນະໂຍບາຍຂອງລັດ ແລະ ສະພາບຕົວຈິງທີ່ເກີດຂຶ້ນໃນສັງຄົມ. ນອກຈາກນີ້ ຍັງໄດ້ຄົ້ນຄວ້າ ກົດໝາຍວ່າດ້ວຍຫຼັກຊັບຂອງຫຼາຍປະເທດ ເຊັ່ນ: ສສ.ຫວຽດນາມ, ສປ.ຈີນ, ສ.ເກົາຫຼີ, ໄທ, ມາເລເຊຍ ແລະ ຫຼັກການຂອງສາກົນຈຳນວນໜຶ່ງ ເປັນຕົ້ນ: ຫຼັກການຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO).

ຮ່າງນິຕິກຳທີ່ສະເໜີປັບປຸງນັ້ນ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼື ບໍ່?

☑ ສອດຄ່ອງ ☐ບໍ່ສອດຄ່ອງ

ຖ້າບໍ່ສອດຄ່ອງ, ກະລຸນາອະທິບາຍແຈ້ງ

# 4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ

## 4.1. ສັງຄົມ

### 4.1.1. ຜົນກະທົບ

ການປັບປຸງກົດໝາຍວ່າດ້ວຍຫຼັກຊັບສະບັບນີ້ ແມ່ນມີຈຸດປະສົງເພື່ອ ສ້າງສະພາບແວດລ້ອມ ແລະ ເງື່ອນໄຂ ອັນດີໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບໃຫ້ມີປະສິດທິພາບຫຼາຍຂຶ້ນ, ສາມາດດຶງດູດການລົງທຶນ ແລະ ການລະດົມທຶນ ໃນຂົງເຂດວຽກງານຫຼັກຊັບໃຫ້ຫຼາຍຂຶ້ນກວ່າເກົ່າ. ສະນັ້ນ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ຈະໄດ້ຮັບຜົນກະທົບຈາກການປັບປຸງກົດໝາຍວ່າດ້ວຍຫຼັກຊັບສະບັບນີ້ ຄືດັ່ງນີ້:

**ຜົນກະທົບທາງບວກ**

- ເຮັດໃຫ້ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການຊຸກຍູ້, ສົ່ງເສີມ ແລະ ພັດທະນາ ວຽກງານຫຼັກຊັບຫຼາຍຂຶ້ນ;
- ສາມາດແກ້ໄຂຂໍ້ຈຳກັດຕ່າງໆຂອງ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປີ 2012) ຊຶ່ງເປັນການກີດໜ່ວງຖ່ວງດຶງການຂະຫຍາຍຕົວຂອງວຽກງານຕະຫຼາດທຶນ;
- ຮັບປະກັນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະ ສັງຄົມ ດ້ວຍລະບົບກົດໝາຍທີ່ມີຄວາມຄົບຖ້ວນ ແລະ ສົມບູນ ຫຼາຍຂຶ້ນກວ່າເກົ່າ;
- ສ້າງຄວາມເຊື່ອໝັ້ນໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າມາລົງທຶນ ແລະ ລະດົມທຶນຜ່ານລະບົບຕະຫຼາດທຶນ ຫຼາຍຂຶ້ນກວ່າເກົ່າ;
- ເຮັດໃຫ້ພາບພົດຂອງ ສປປ ລາວ ສູງເດັ່ນຂຶ້ນອີກບາດກ້າວໜຶ່ງໃນເວທີສາກົນ ພ້ອມທັງເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ບັນດາປະເທດໃນພາກພື້ນ ແລະ ສາກົນ.

**ຜົນກະທົບທາງລົບ**

- ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ຕ້ອງເພີ່ມທະວີ ແລະ ມີສະຕິເຄົາລົບຕໍ່ກັບກົດໝາຍຫຼາຍຂຶ້ນກວ່າເກົ່າ.

### 4.1.2. ເງື່ອນໄຂໃນການປະຕິບັດການປັບປຸງກົດໝາຍວ່າດ້ວຍຫຼັກຊັບ

ໃນການຈັດຕັ້ງປະຕິບັດການ ປັບປຸງກົດໝາຍວ່າດ້ວຍຫຼັກຊັບ ສະບັບນີ້ ຖືໄດ້ວ່າມີຄວາມສະດວກຫຼາຍພໍສົມຄວນ ເນື່ອງຈາກວ່າ ຈຸດປະສົງ, ຫຼັກການພື້ນຖານ ແລະ ເນື້ອໃນຫຼັກຂອງ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ແມ່ນຍັງຄົງຮັກສາໄວ້ຄືເກົ່າ ແຕ່ໄດ້ມີການເພີ່ມບົດບັນຍັດເຂົ້າຕື່ມຈຳນວນໜຶ່ງ ເພື່ອເຮັດໃຫ້ຮ່າງກົດໝາຍສະບັບປັບປຸງໃໝ່ນີ້ຈະແຈ້ງ ແລະ ສົມບູນຫຼາຍຂຶ້ນ ເປັນຕົ້ນ ກອງທຶນສ່ວນບຸກຄົນ, ບໍລິສັດປະເມີນມູນຄ່າຊັບສິນ, ນັກວິຊາຊີບທຸລະກິດຫຼັກຊັບ, ການຊື້ຂາຍຫຼັກຊັບ ແລະ ການກະທຳທີ່ບໍ່ຍຸຕິທຳ ແລະ ການພົວພັນສາກົນ ຊຶ່ງເນື້ອໃນດັ່ງກ່າວລ້ວນແຕ່ເຮັດໃຫ້ກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງນີ້ມີຄວາມສົມບູນຂຶ້ນກວ່າເກົ່າ.

ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດການປັບປຸງກົດໝາຍວ່າດ້ວຍຫຼັກຊັບ:

ຄ່າໃຊ້ຈ່າຍເບື້ອງຕົ້ນ (ຖ້າມີ):

ຄ່າໃຊ້ຈ່າຍໃນແຕ່ລະປີ:

**4.1.3. ການທາບທາມຄຳເຫັນ**

ການປັບປຸງກົດໝາຍວ່າດ້ວຍຫຼັກຊັບໃນຄັ້ງນີ້ ຄະນະຮັບຜິດຊອບຈະໄດ້ທາບທາມຄຳເຫັນຢ່າງກວ້າງຂວາງຈາກ ບຸກຄົນ, ນິຕິບຸກຄົນ ທັງພາກລັດ ແລະ ເອກະຊົນ ໃນລະດັບຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເຊັ່ນ: ທາບທາມຄຳເຫັນຮ່ວມກັບ ຜູ້ມີສ່ວນຮ່ວມໃນຕະຫຼາດຫຼັກຊັບ ແລະ ທະນາຄານແຫ່ງ ສປປ ລາວ, ທາບທາມຄຳເຫັນເປີດກວ້າງ (ພາກເໜືອ, ພາກກາງ ແລະ ພາກໃຕ້). ພ້ອມດຽວກັນນີ້ ກໍ່ຍັງໄດ້ທາບທາມ ແລະ ຂໍຄຳເຫັນຈາກ ອົງການຈັດຕັ້ງສາກົນ ເຊັ່ນ: ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB), ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO). ໂດຍຜ່ານຫຼາຍວິທີການເຊັ່ນ: ທາບທາມຜ່ານເວັບໄຊ, ຈັດກອງປະຊຸມ ແລະ ສົ່ງຮ່າງກົດໝາຍໃຫ້ພາກສ່ວນກ່ຽວຂ້ອງເພື່ອປະກອບຄຳເຫັນໃສ່.

ຜ່ານການທາບທາມຄຳເຫັນ ຖືໄດ້ວ່າ ຄະນະຮັບຜິດຊອບຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບໄດ້ຮັບບຳຄຶດຄຳເຫັນທີ່ດີຫຼາຍກັບມາ ແລະ ເປັນປະໂຫຍດຢ່າງຍິ່ງໃຫ້ແກ່ ການພິຈາລະນາ ແລະ ປັບປຸງເນື້ອໃນຂອງ ຮ່າງກົດໝາຍວ່າດ້ວຍຫຼັກຊັບໃຫ້ມີເນື້ອໃນທີ່ສົມບູນ.

**4.1.4. ສະຫຼຸບ**

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍຕໍ່ສັງຄົມ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍຮຽກຮ້ອງໃຫ້ເຮັດການວິເຄາະແບບລົງເລິກ ກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນຢ່າງກວ້າງຂວາງກັບຊຸມຊົນ.

| **ຕົວຊີ້ວັດຜົນກະທົບ** | **ບໍ່ມີ** | **ໜ້ອຍ** | **ຫຼາຍ** |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☑ | ☐ | ☐ |

| | | | |
|---|---|---|---|
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດຳລົງຊີວິດຂອງບຸກຄົນ)* | ☐ | ☑ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

## 4.2. ພາກທຸລະກິດ

### 4.2.1. ຜົນກະທົບ

ການປັບປຸງກົດໝາຍວ່າດ້ວຍຫຼັກຊັບສະບັບນີ້ ແມ່ນມີຜົນກະທົບຕໍ່ກັບພາກທຸລະກິດ ດັ່ງນີ້:

**ຜົນກະທົບທາງບວກ**

- ການປັບປັບປຸງກົດໝາຍວ່າດ້ວຍຫຼັກຊັບຄັ້ງນີ້ ແມ່ນໄດ້ສ້າງສະພາບແວດລ້ອມອັນດີໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບ ເວົ້າລວມ, ເວົ້າສະເພາະແມ່ນ ການເຂົ້າຮ່ວມລົງທຶນ ແລະ ການລະດົມທຶນຜ່ານລະບົບຕະຫຼາດທຶນ;
- ສ້າງຄວາມເຊື່ອໝັ້ນໃຫ້ແກ່ບັນດາຫົວໜ່ວຍທຸລະກິດໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ໂດຍສະເພາະແມ່ນ ຜູ້ລົງທຶນລາຍຍ່ອຍ;
- ເຮັດໃຫ້ພາກທຸລະກິດມີຄວາມເຂົ້າໃຈ ແລະ ສາມາດຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງໃໝ່ນີ້ ໄດ້ງ່າຍ ແລະ ວ່ອງໄວຫຼາຍຂຶ້ນ;
- ການປັບປຸງເນື້ອໃນກົດໝາຍຄັ້ງນີ້ ເຮັດໃຫ້ບັນດານິຕິບຸກຄົນ ສາມາດເຂົ້າຮ່ວມການລະດົມທຶນຜ່ານຕະຫຼາດທຶນໄດ້ງ່າຍຂຶ້ນ, ຜູ້ລົງທຶນສາມາດເຂົ້າຮ່ວມການລົງທຶນໃນຕະຫຼາດທຶນໄດ້ງ່າຍຂຶ້ນທັງທາງກົງ ແລະ ລົງທຶນຜ່ານກອງທຶນຮ່ວມ ຫຼື ກອງທຶນສ່ວນບຸກຄົນ, ນິຕິບຸກຄົນທີ່ມີຈຸດປະສົງເຂົ້າມາເຄື່ອນໄຫວເປັນສະຖາບັນສື່ກາງດ້ານຫຼັກຊັບ ກໍ່ມີບ່ອນອີງທາງດ້ານນິຕິກຳຫຼາຍຂຶ້ນ;
- ປັບປຸງບັນດາຂັ້ນຕອນຕ່າງໆຂອງການພິຈາລະນາອະນຸມັດໃຫ້ວ່ອງໄວຂຶ້ນ ເປັນຕົ້ນ ການອອກຈຳໜ່າຍຫຼັກຊັບ, ການດຳເນີນທຸລະກິດບໍລິສັດຫຼັກຊັບ, ການດຳເນີນທຸລະກິດຕະຫຼາດຫຼັກຊັບ ແລະ ການຮັບຮອງການເຂົ້າມາເຄື່ອນໄຫວຂອງບັນດາສະຖາບັນສື່ກາງດ້ານຫຼັກຊັບ ຊຶ່ງສົ່ງຜົນກະທົບອັນດີໃຫ້ແກ່ການດຳເນີນທຸລະກິດທີ່ງ່າຍຂຶ້ນ.

**ຜົນກະທົບທາງລົບ**

- ຫົວໜ່ວຍທຸລະກິດ ຫຼື ນິຕິບຸກຄົນ ຕ້ອງໄດ້ສຶກສາ ແລະ ທຳຄວາມເຂົ້າໃຈກ່ຽວກັບກົດໝາຍໃຫ້ຫຼາຍຂຶ້ນ, ບັນດາຫົວໜ່ວຍທຸລະກິດ ແລະ ນິຕິບຸກຄົນ ທີ່ຫວັງສ່ວຍໃຊ້ຊ່ອງຫວ່າງຂອງກົດໝາຍຈະໄດ້ຮັບຜົນກະທົບຈາກການປັບປຸງກົດໝາຍວ່າດ້ວຍຫຼັກຊັບ ຍ້ອນວ່າ ກົດໝາຍສະບັບນີ້ຈະໄປອັດຊ່ອງຫວ່າງກ່ຽວກັບການເຄື່ອນໄຫວລະດົມທຶນທຸກຮູບແບບ ໂດຍບໍ່ໄດ້ຮັບອະນຸຍາດ.

#### 4.2.2. ເງື່ອນໄຂໃນການປະຕິບັດກົດໝາຍວ່າດ້ວຍຫຼັກຊັບ

ໃນການຈັດຕັ້ງປະຕິບັດການປັບປຸງກົດໝາຍວ່າດ້ວຍຫຼັກຊັບ ສະບັບນີ້ ຖືໄດ້ວ່າມີຄວາມສະດວກຫຼາຍພໍສົມຄວນ ເນື່ອງຈາກວ່າ ຈຸດປະສົງ, ຫຼັກການພື້ນຖານ ແລະ ເນື້ອໃນຫຼັກຂອງ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ແມ່ນຍັງຄົງຮັກສາໄວ້ຄືເກົ່າ ແຕ່ໄດ້ມີການປັບປຸງ ເພີ່ມ ແລະ ຕັດ ເນື້ອໃນຂອງບາງບົດບັນຍັດ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍສະບັບນີ້ສອດຄ່ອງກັບການຂະຫຍາຍຕົວຂອງວຽກງານຫຼັກຊັບໃນປະຈຸບັນ ໂດຍສະເພາະແມ່ນ ກອງທຶນສ່ວນບຸກຄົນ, ການປະເມີນມູນຄ່າຊັບສິນ, ການຮ່ວມມືສາກົນ ແລະ ການຊື້ຂາຍຫຼັກຊັບ ແລະ ການກະທຳທີ່ບໍ່ຍຸຕິທຳ ຊຶ່ງຖືວ່າເປັນບັນຫາສຳຄັນໃນການດຶງດູດການລົງທຶນ ແລະ ລະດົມທຶນຜ່ານຕະຫຼາດທຶນ ເນື່ອງຈາກວ່າ ທີ່ຜ່ານມາແມ່ນພວກເຮົາຍັງບໍ່ທັນໄດ້ກຳນົດໄວ້ໃນກົດໝາຍ

ຄາດຄະເນຄ່າສິ້ນເປືອງສະເລ່ຍ ຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດ ກົດໝາຍວ່າດ້ວຍຫຼັກຊັບ:

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ):

ຄ່າໃຊ້ຈ່າຍ ໃນແຕ່ລະປີ:

#### 4.2.3. ການທາບທາມຄຳເຫັນ

ການປັບປຸງກົດໝາຍວ່າດ້ວຍຫຼັກຊັບໃນຄັ້ງນີ້ ຄະນະຮັບຜິດຊອບຈະໄດ້ທາບທາມຄຳເຫັນຢ່າງກວ້າງຂວາງຈາກ ບຸກຄົນ, ນິຕິບຸກຄົນ ທັງພາກລັດ ແລະ ເອກະຊົນ ໂດຍສະເພາະແມ່ນ ບັນດາບໍລິສັດ, ລັດວິສາຫະກິດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ. ໂດຍຜ່ານຫຼາຍວິທີການເຊັ່ນ: ທາບທາມຜ່ານເວັບໄຊ, ຈັດກອງປະຊຸມ ແລະ ສົ່ງຮ່າງກົດໝາຍໃຫ້ພາກສ່ວນກ່ຽວຂ້ອງເພື່ອປະກອບຄຳເຫັນໃສ່.

ຜ່ານການທາບທາມຄຳເຫັນ ຖືໄດ້ວ່າ ຄະນະຮັບຜິດຊອບຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍຫຼັກຊັບ ໄດ້ຮັບຄຳຄິດຄຳເຫັນທີ່ດີຫຼາຍກັບມາ ແລະ ເປັນປະໂຫຍດຢ່າງຍິ່ງໃຫ້ແກ່ ການພິຈາລະນາ ແລະ ປັບປຸງເນື້ອໃນຂອງ ຮ່າງກົດໝາຍວ່າດ້ວຍຫຼັກຊັບໃຫ້ມີເນື້ອໃນທີ່ສົມບູນ.

#### 4.2.4. ສະຫຼຸບ

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກຳທີ່ສະເ ໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍຕໍ່ພາກທຸລະກິດ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍຮຽກຮ້ອງໃຫ້ເຮັດການວິເຄາະແບບລົງເລິກ ກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນຢ່າງກວ້າງຂວາງ ກັບພາກທຸລະກິດ.

| **ຕົວຊີ້ວັດຜົນກະທົບ** | **ບໍ່ມີ** | **ໜ້ອຍ** | **ຫຼາຍ** |
| --- | --- | --- | --- |
| ຈຳນວນຂະແໜງອຸດສາຫະກຳທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກຳສ່ວນໃຫຍ່/ທັງໝົດໄດ້ຮັບ ຜົນ* | ☑ | ☐ | ☐ |

| | | | |
|---|---|---|---|
| *ກະທົບ)* | | | |
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວ ທີ່ຖືກຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ)* | ☑ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ)* | ☑ | ☐ | ☐ |
| ການບໍ່ເຫັນດີ ຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບ ຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

### 4.3. ລັດຖະບານ

#### 4.3.1. ຜົນກະທົບ

ພາຍຫຼັງ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ ແລ້ວ ກົດໝາຍສະບັບນີ້ຈະກາຍເປັນເຄື່ອງມືອັນຕົ້ນຕໍ ແລະ ເປັນບ່ອນອີງທີ່ສຳຄັນໃຫ້ແກ່ລັດຖະບານ ໃນການດຶງດູດ ການລົງທຶນ ແລະ ການລະດົມທຶນ ຜ່ານຕະຫຼາດທຶນ ທັງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ; ພ້ອມດຽວກັນນີ້, ກໍ່ຈະເປັນການຈຳກັດ, ສະກັດກັ້ນ ແລະ ຕ້ານການສວຍໃຊ້ໂອກາດ ຂອງ ບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ຫວັງດີ ແລະ ຫວັງສວຍໃຊ້ຊ່ອງຫວ່າງຂອງກົດໝາຍມາຫາຜົນປະໂຫຍດຢູ່ ສປປ ລາວ. ນອກຈາກນີ້, ກໍ່ເຮັດໃຫ້ລະບົບກົດໝາຍໃນຂະແໜງການເງິນມີຄວາມຄົບຖ້ວນ, ສົມບູນຫຼາຍຂຶ້ນກວ່າເກົ່າ ພ້ອມທັງເປັນພື້ນຖານອັນສຳຄັນໃຫ້ແກ່ການສ້າງລັດແຫ່ງ ສປປ ລາວ ໃຫ້ກາຍເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ. ແຕ່ເພື່ອສ້າງເງື່ອນໄຂໃຫ້ປະຕິບັດໄດ້ຄືດັ່ງທີ່ກ່າວມານັ້ນ ລັດຖະບານຕ້ອງໄດ້ນຳໃຊ້ງົບປະມານຈຳນວນໜຶ່ງເຂົ້າໃນການ ໂຄສະນາ, ເຜີຍແຜ່ໃຫ້ ບຸກຄົນ, ນິຕິບຸກຄົນ ພາກລັດ ແລະ ເອກະຊົນ ລວມທັງຕ່າງປະເທດທີ່ເຂົ້າມາເຄື່ອນໄຫວທຸລະກິດຢູ່ ສປປ ລາວ ເພື່ອໃຫ້ເຂົາເຈົ້າໄດ້ຮັບຮູ້ ແລະ ເຂົ້າໃຈ ກໍ່ກັບກົດໝາຍວ່າດ້ວຍຫຼັກຊັບສະບັບນີ້ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ.

**ຜົນກະທົບທາງບວກ**

- ລັດຖະບານຈະມີລາຍຮັບຈາກການເສຍພັນທະທາງດ້ານພາສີອາກອນ ຈາກ ບຸກຄົນ ແລະ ນິຕິບຸກຄົນ ທີ່ເຂົ້າມາເຄື່ອນໄຫວລົງທຶນ ແລະ ລະດົມທຶນຜ່ານຕະຫຼາດທຶນ;
- ເປັນເຄື່ອງມືຂອງລັດຖະບານໃນການຈຳກັດ, ສະກັດກັ້ນ ແລະ ຕ້ານການສວຍໂອກາດຂອງ ບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ຫວັງດີ ແລະ ຫວັງສວຍໃຊ້ຊ່ອງຫວ່າງຂອງກົດໝາຍມາຫາຜົນປະໂຫຍດຢູ່ ສປປ ລາວ;
- ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນທັງ ພາຍໃນ ແລະ ຕ່າງປະເທດ;
- ຂະແໜງການກ່ຽວຂ້ອງທັງ ສູນກາງ ແລະ ທ້ອງຖິ່ນ ມີຄວາມຮັບຜິດຊອບໂດຍກົງໃນການຕິດຕາມ, ກວດກາ ຢ່າງໃກ້ສິດ ແລະ ເປັນປົກກະຕິ ຕໍ່ກັບບັນ ບໍລິສັດ ຫຼື ນິຕິບຸກຄົນ ທີ່ເຂົ້າມາລະດົມທຶນຜ່ານຕະຫຼາດທຶນ ທີ່ຕັ້ງຢູ່ໃນຂອບເຂດສິດຂອງຕົນ;

– ສາມາດດຶງດູດເອົາ ການລົງທຶນ ແລະ ການລະດົມທຶນ ຜ່ານຕະຫຼາດທຶນ ທີ່ມີຄຸນນະພາບ ແລະ ຮັບປະກັນການພັດທະນາວຽກງານຫຼັກຊັບ ຕອບສະໜອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ, ສ້າງວຽກເຮັດງານທຳຢ່າງກວ້າງຂວາງ, ສ້າງລາຍຮັບຢ່າງແຂງແຮງ ແລະ ເປັນລະບົບ ສາມາດຫຼຸດຜ່ອນຄວາມທຸກຍາກ, ສ້າງຄວາມສີວິໄລທີ່ເປັນຮູບປະທຳໃຫ້ແກ່ປະເທດຊາດ.

**ຜົນກະທົບທາງລົບ**

– ເຖິງແມ່ນວ່າ ການປັບປຸງກົດໝາຍວ່າດ້ວຍຫຼັກຊັບສະບັບນີ້ ຈະບໍ່ໄດ້ກຳນົດໂດຍກົງໃຫ້ລັດຖະບານຕ້ອງນຳໃຊ້ງົບປະມານເຂົ້າໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້, ແຕ່ເພື່ອສ້າງເງື່ອນໄຂໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີນັ້ນ ລັດຖະບານຕ້ອງໄດ້ມີການຍົກລະດັບ ແລະ ພັດທະນາຊັບພະຍາກອນມະນຸດໃນຂົງເຂດວຽກງານຫຼັກຊັບ ດ້ວຍການຈັດຝຶກອົບຮົມທາງດ້ານວິຊາສະເພາະ ທັງພາຍໃນ ແລະ ຕ່າງປະເທດ, ດຳເນີນການເຜີຍແຜ່ກົດໝາຍ ໂດຍສະເພາະ ກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງນີ້ ໃຫ້ຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເອກະພາບກັນ.

### 4.3.2. ເງື່ອນໄຂໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຫຼັກຊັບ

ໃນການຈັດຕັ້ງປະຕິບັດການປັບປຸງກົດໝາຍວ່າດ້ວຍຫຼັກຊັບສະບັບນີ້ ຖືວ່າມີພື້ນຖານທີ່ດີຫຼາຍເນື່ອງຈາກວ່າ ລັດຖະບານ ກໍ່ຄືອົງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຫຼັກຊັບ ມີຄວາມຮັບຮູ້ ແລະເຂົ້າໃຈກ່ຽວກັບການຄຸ້ມຄອງວຽກງານຫຼັກຊັບມາກ່ອນແລ້ວ, ມີພຽງແຕ່ບາງບັນຫາເທົ່ານັ້ນ ທີ່ຈະຕ້ອງໄດ້ມີການປຶກສາຫາລື ແລະ ຝຶກອົບຮົມກັນຕື່ມ ໂດຍສະເພາະການກຳນົດກ່ຽວກັບບັນດາບົດບັນຍັດເຂົ້າໃໝ່.

**ຄ່າໃຊ້ຈ່າຍເບື້ອງຕົ້ນ (ຖ້າມີ):** ບໍ່ມີ

**ຄ່າໃຊ້ຈ່າຍປະຈຳປີ:** ບໍ່ມີ

### 4.3.3. ການທາບທາມຄຳເຫັນ

ການປັບປຸງກົດໝາຍວ່າດ້ວຍຫຼັກຊັບໃນຄັ້ງນີ້ ນອກຈາກມີຜູ້ຕາງໜ້າຈາກ ທະນາຄານແຫ່ງ ສປປ ລາວ, ຫ້ອງວ່າການສຳນັກງານງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ສະພາແຫ່ງຊາດ ທີ່ເຂົ້າຮ່ວມໃນຄະນະຮັບຜິດຊອບຄົ້ນຄວ້າແລ້ວ, ຄະນະດັ່ງກ່າວ ຍັງໄດ້ນຳເອົາຮ່າງກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງນີ້ ໄປທາບທາມຄຳເຫັນຮ່ວມກັບ ຜູ້ມີສ່ວນຮ່ວມໃນຕະຫຼາດຫຼັກຊັບ ແລະ ທະນາຄານແຫ່ງ ສປປ ລາວ, ທາບທາມຄຳເຫັນເປີດກວ້າງ (ພາກເໜືອ, ພາກກາງ ແລະ ພາກໃຕ້) ທັງພາກລັດ ແລະ ເອກະຊົນ. ພ້ອມດຽວກັນນີ້ ກໍ່ຍັງໄດ້ທາບທາມ ແລະ ຂໍຄຳເຫັນຈາກ ອົງການຈັດຕັ້ງສາກົນ ເຊັ່ນ: ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB), ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO). ພ້ອມດຽວກັນນີ້, ກໍ່ຍັງໄດ້ປຶກສາຫາລືສະເພາະກັບພາກສ່ວນທີ່ກ່ຽວຂ້ອງ ຕໍ່ກັບບາງບັນຫາທີ່ຍັງບໍ່ທັນຈະແຈ້ງ.

ໃຫ້ກຳນົດບັນດາກະຊວງ, ອົງການຈັດຕັ້ງລັດ ທີ່ມີສ່ວນກ່ຽວຂ້ອງ ຊຶ່ງຈະຖືກທາບທາມຄຳເຫັນ (ໃນຂັ້ນສູນກາງ ແລະທ້ອງຖິ່ນ) ແລະ ຜົນໄດ້ຮັບຈາກການທາບທາມຄຳເຫັນນັ້ນ.

### 4.3.4. ສະຫຼຸບ

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກຳ ທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍ ຕໍ່ລັດຖະບານ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍ ຮຽກຮ້ອງໃຫ້ຕ້ອງມີການເຮັດວິເຄາະແບບລົງເລິກກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນ ກັບອົງການຈັດຕັ້ງຂອງລັດຢ່າງກວ້າງຂວາງ.

| **ຕົວຊີ້ວັດຜົນກະທົບ** | **ບໍ່ມີ** | **ໜ້ອຍ** | **ຫຼາຍ** |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ)* | ☑ | ☐ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບ ຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການ ຢູ່ຂັ້ນແຂວງ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ(ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ)* | ☑ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ)* | ☐ | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

## 5. ການຈັດຕັ້ງປະຕິບັດ

### 5.1. ການສະໜັບສະໜູນ ແກ່ບຸກຄົນ

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ໃຫ້ໄດ້ຮັບຜົນດີນັ້ນ ລັດຖະບານຕ້ອງໄດ້ມີການຍົກລະດັບ ແລະ ພັດທະນາຊັບ ພະຍາກອນມະນຸດໃນຂົງເຂດວຽກງານຫຼັກຊັບ ດ້ວຍການຈັດຝຶກອົບຮົມທາງດ້ານວິຊາສະເພາະ ທັງພາຍໃນ ແລະ ຕ່າງປະເທດ, ພ້ອມດຽວກັນນີ້ຕ້ອງໄດ້ຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ໃຫ້ ບຸກຄົນ ທັງພາກລັດ ແລະ ເອກະຊົນ ໂດຍສະເພາະແມ່ນຜູ້ລົງທຶນ ໃຫ້ກວ້າງຂວາງ ເພື່ອໃຫ້ເຂົ້າເຈົ້າໄດ້ຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເອກະພາບກັນ ໂດຍຜ່ານສື່ມວນຊົນຕ່າງໆ ເປັນຕົ້ນແມ່ນ ໂທລະພາບ, ວິທະຍຸ, ໜັງສືພິມ, ເວັບໄຊ ຫຼື ວິທີການອື່ນທີ່ເໝາະສົມ.

### 5.2. ການສະໜັບສະໜູນແກ່ພາກທຸລະກິດ

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ໃຫ້ໄດ້ຮັບຜົນດີນັ້ນ ລັດຖະບານຕ້ອງໄດ້ມີການ ສະໜອງຂໍ້ມູນ-ຂ່າວສານຕ່າງໆ ທີ່ກ່ຽວຂ້ອງກັບກົດໝາຍສະບັບນີ້ ໃຫ້ແກ່ຫົວໜ່ວຍທຸລະກິດ ຫຼື ນິຕິບຸກຄົນ ເພື່ອເປັນຂໍ້ມູນໃນການສຶກສາ ແລະ ທຳຄວາມເຂົ້າໃຈກ່ຽວກັບກົດໝາຍໃຫ້ຫຼາຍຂຶ້ນ.

### 5.3. ແຜນການຈັດຕັ້ງປະຕິບັດ

ພາຍຫຼັງ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ແລ້ວພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ໃນການຈັດຕັ້ງປະຕິບັດ ໂດຍສະເພາະແມ່ນ ລັດຖະບານ, ທະນາຄານແຫ່ງ ສປປ ລາວ ແລະ ຜູ້ທີ່ມີສ່ວນຮ່ວມໃນຕະຫຼາດຫຼັກຊັບ ຊຶ່ງຕ້ອງໄດ້ເອົາໃຈໃສ່ໃນການໂຄສະນາເຜີຍແຜ່ກົດໝາຍສະບັບນີ້ໃຫ້ ສັງຄົມ, ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ໃຫ້ເຂົາເຈົ້າມີຄວາມຮັບຮູ້, ເຂົ້າໃຈ ແລະ ປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ. ພ້ອມດຽວກັນນັ້ນ, ກໍ່ຕ້ອງໄດ້ມີການຈັດຝຶກອົບຮົມເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈເປັນເອກະພາບກັນ ລະຫວ່າງຂະແໜງການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຫຼັກຊັບ ເພື່ອສ້າງເງື່ອນໄຂໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ.

### 5.4. ງົບປະມານ ແລະ ແຫຼ່ງທຶນ

ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ແມ່ນນຳໃຊ້ງົບປະມານຂອງລັດຖະບານ ເຂົ້າໃນການຈັດຝຶກອົບຮົມທາງດ້ານວິຊາສະເພາະ ທັງພາຍໃນ ແລະ ຕ່າງປະເທດ, ໂຄສະນາເຜີຍແຜ່ໃຫ້ ບຸກຄົນ ທັງພາກລັດ ແລະ ເອກະຊົນ ໂດຍສະເພາະແມ່ນຜູ້ລົງທຶນ ໃຫ້ກວ້າງຂວາງ ເພື່ອໃຫ້ເຂົ້າເຈົ້າໄດ້ຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເອກະພາບກັນ ໂດຍຜ່ານສື່ມວນຊົນຕ່າງໆ ເປັນຕົ້ນແມ່ນ ໂທລະພາບ, ວິທະຍຸ, ໜັງສືພິມ, ເວັບໄຊ ຫຼື ວິທີການອື່ນທີ່ເໝາະສົມ.

### 5.5. ທົບທວນຄືນ

ພາຍຫຼັງ ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ແລ້ວ ໃນທຸກໆໜຶ່ງປີ ອົງການຄຸ້ມຄອງວຽກງານຫຼັກຊັບ ຈະປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອທົບທວນຄືນຜົນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ລວມທັງກົດໝາຍອື່ນທີ່ກ່ຽວຂ້ອງ ເພື່ອນຳມາເປັນຂໍ້ມູນປັບປຸງແກ້ໄຂບັນຫາທີ່ບໍ່ສອດຄ່ອງໃນແຕ່ລະໄລຍະ.

## ການອະນຸມັດ

ໄດ້ເຮັດອັນໃດໃນລຸ່ມນີ້

1. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ ຫຼື

2. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາມີຄຳເຫັນຕໍ່ບົດປະເມີນຜົນ

| | |
|---|---|
| ……………………………. | ……………………………... |
| ຫົວໜ້າຄະນະຮັບຜິດຊອບຮ່າງນິຕິກຳ | ວັນທີ |